ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 01 / ທຫລ
ນະຄອນຫຼວງວຽງຈັນ, ວັນທີ 15/05/2007

# ລະບຽບ
## ການສ້າງຕັ້ງ ແລະ ຄຸ້ມຄອງບໍລິສັດນຳເຂົ້າ- ສົ່ງອອກ ວັດຖຸມີຄ່າ

- ອີງຕາມລັດຖະບັນຍັດເລກທີ 01/ສປປ, ລົງວັນທີ 9/8/02 ແລະ ບົດແນະນຳຈັດຕັ້ງປະຕິບັດ ເລກທີ 02/ທຫລ, ລົງວັນທີ 29/09/2003 ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກລະບຽບດັ່ງນີ້:

### ໝວດທີ I.
### ຂໍ້ກຳນົດທົ່ວໄປ

ມາດຕາ 1. ຈຸດປະສົງ:

ລະບຽບສະບັບນີ້ສ້າງຕັ້ງຂຶ້ນເພື່ອກຳນົດເງື່ອນໄຂການສ້າງຕັ້ງ, ຂອບເຂດສິດ ແລະໜ້າທີ່, ລະບຽບການຊື້-ຂາຍ, ລະບົບການກວດກາ, ການລາຍງານ ແລະ ບັນຫາສຳຄັນອື່ນໆກ່ຽວກັບການສ້າງຕັ້ງ ແລະຄຸ້ມຄອງບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າ ຢູ່ ສປປ ລາວເພື່ອເປັນພື້ນຖານໃຫ້ແກ່ການເຄື່ອນໄຫວຂອງບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າ ແລະ ສະດວກໃຫ້ແກ່ ທະນາຄານ ແຫ່ງ ສປປ ລາວ ໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກວັດຖຸມີຄ່າໃຫ້ສອດຄ່ອງກັບນະໂຍບາຍເງິນຕາໃນພື້ນຖານເສດຖະກິດຂອງ ສປປ ລາວ.

ມາດຕາ 2. ການອະທິບາຍຄຳສັບ:

ຄຳສັບຕ່າງໆໃນລະບຽບການສະບັບນີ້ມີຄວາມໝາຍດັ່ງນີ້:

-"ວັດຖຸມີຄ່າ ທີ່ກຳນົດໃນລະບຽບສະບັບນີ້ " ໝາຍເຖິງຄຳແທ່ງ ທີ່ໄດ້ມາດຕະຖານສາກົນ 99,99% ແລະເງິນເມັດ ທີ່ໄດ້ມາດຕະຖານສາກົນ 99.9% ທີ່ຍັງບໍ່ທັນໄດ້ແປຮູບເປັນຮູບປະພັນ;

- " ບໍລິສັດນຳເຂົ້າ- ສົ່ງອອກວັດຖຸມີຄ່າ" ໝາຍເຖິງບໍລິສັດທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກທະນາຄານແຫ່ງ ສປປ ລາວໃຫ້ດຳເນີນທຸລະກິດນຳເຂົ້າ- ສົ່ງອອກວັດຖຸມີຄ່າເພື່ອຂາຍຍົກໃຫ້ແກ່ຫົວໜ່ວຍທຸລະກິດປຸງແຕ່ງວັດຖຸມີຄ່າຢູ່ພາຍໃນປະເທດ ແລະ ເພື່ອສົ່ງອອກວັດຖຸມີຄ່າໄປຂາຍຢູ່ຕ່າງປະເທດ;

- ໃບລາຍງານຖານະການເງິນໝາຍເຖິງ ໃບສະຫລຸບຊັບສິນບັດ, ໃບສະຫລຸບລາຍຮັບ-ລາຍຈ່າຍ, ບັນຊີເງິນຝາກ, ບັນຊີຊື້-ຂາຍວັດຖຸມີຄ່າ.

ມາດຕາ 3. ການຂໍອະນຸຍາດສ້າງຕັ້ງບໍລິສັດນຳເຂົ້າ-ສົ່ງອອກ ວັດຖຸມີຄ່າ:

ບຸກຄົນ, ນິຕິບຸກຄົນລາວ ທີ່ມີເງື່ອນໄຂຄົບຖ້ວນດັ່ງທີ່ກຳນົດໄວ້ໃນມາດຕາ 4ຂອງລະບຽບການສະບັບນີ້ທີ່ມີຈຸດປະສົງຂໍອານຸຍາດສ້າງຕັ້ງບໍລິສັດນຳເຂົ້າ- ສົ່ງອອກວັດຖຸມີຄ່ານຳທະນາຄານແຫ່ງ ສປປ ລາວ ຕ້ອງໄດ້ຍື່ນໃບສະເໜີເປັນລາຍຫລັກອັກສອນເຖິງ ທະນາຄານແຫ່ງ ສປປ ລາວ. ພາຍຫລັງທີ່ໄດ້ຮັບອະນຸຍາດຢ່າງເປັນທາງການຈາກທະນາຄານ ແຫ່ງ ສປປ ລາວແລ້ວຈຶ່ງໄປຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນນຳພາກສ່ວນກ່ຽວຂ້ອງຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

ສຳລັບນັກລົງທຶນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ຫຼືຂັ້ນແຂວງ ແລ້ວແຕ່ກໍລະນີ ພ້ອມດ້ວຍເອກະສານປະກອບຄື: ສຳເນົາໜັງສືຜ່ານແດນ, ຊີວະປະຫວັດ, ບົດວິພາກເສດຖະກິດ-ເຕັກນິດ ຫຼືແຜນການດຳເນີນທຸລະກິດ, ຂໍ້ມູນກ່ຽວກັບທຸລະກິດ.

## ໝວດທີ II
## ເງື່ອນໄຂ ແລະການພິຈາລະນາການສ້າງຕັ້ງບໍລິສັດນຳເຂົ້າ- ສົ່ງອອກ ວັດຖຸມີຄ່າ

ມາດຕາ 4. ເງື່ອນໄຂການສ້າງຕັ້ງບໍລິສັດນຳເຂົ້າ- ສົ່ງອອກ ວັດຖຸມີຄ່າ:

ເງື່ອນໄຂເພື່ອຂໍ້ສ້າງຕັ້ງບໍລິສັດນຳເຂົ້າ-ສົ່ງອອກ ວັດຖຸມີຄ່າ ມີດັ່ງນີ້:

1. ໃບສະເໜີຂໍສ້າງຕັ້ງບໍລິສັດນຳເຂົ້າ- ສົ່ງອອກ ວັດຖຸມີຄ່າ ຕາມຮ່າງໃບສະເໜີ ທະນາຄານ ແຫ່ງ ສປປ ລາວ;
2. ຖ້າເປັນນິຕິບຸກຄົນລາວ ຕ້ອງມີໃບລາຍງານຖານະການເງິນ, ຖ້າເປັນບຸກຄົນຕ້ອງມີສຳເນົາໃບລອກກ່າຍ ບັນຊີເງິນຝາກຂອງຕົນຢູ່ ທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ໃນໄລຍະ 3 ປີຄືນຫລັງ;
3. ຕ້ອງມີບົດວິພາກເສດຖະກິດ;
4. ຕ້ອງມີໂຄງຮ່າງການຈັດຕັ້ງ, ມີບຸກຄະລະກອນທີ່ມີຄວາມຮູ້ຄວາມສາມາດ ແລະມີເຄື່ອງມືຮັບໃຊ້ໃນການດຳເນີນທຸລະກິດ;
5. ຕ້ອງມີໃບແຈ້ງໂທດຈາກສານ;
6. ຕ້ອງມີທຶນຈົດທະບຽນ ຢ່າງຕ່ຳ 20 ຕື້ກີບ, ໃນນັ້ນເປັນເງິນສົດ 80% ແລະ ເປັນຊັບສິນອື່ນໆ 20%;
7. ຕ້ອງມີສະຖານທີ່ຕັ້ງຂອງຫ້ອງການທີ່ເໝາະສົມ ແລະຮັບປະກັນຄວາມປອດໄພໃນການບໍລິການ;
8. ຜູ້ຍື່ນຄຳຮ້ອງຂໍອະນຸຍາດສ້າງຕັ້ງບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າຕ້ອງເສຍຄ່າທຳນຽມຕາມລະ

ບຽບການ;

ມາດຕາ 5. ການພິຈາລະນາຄໍາຮ້ອງຂໍສ້າງຕັ້ງ:

ທະນາຄານ ແຫ່ງ ສປປ ລາວ ຕ້ອງພິຈາລະນາໃບຄໍາຮ້ອງ ແລະແຈ້ງຜົນຢ່າງເປັນລາຍລັກອັກສອນໃຫ້ແກ່ຜູ້ສະເໜີຂໍສ້າງຕັ້ງຊາບຢ່າງຊ້າບໍ່ໃຫ້ເກີນ 30 ວັນທາງລັດຖະການ ນັບແຕ່ມື້ໄດ້ຮັບໃບຄໍາຮ້ອງຂໍສ້າງຕັ້ງຄົບຖ້ວນຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 4, (ນອກຈາກ ມາດຕາ 4.7) ຂອງລະບຽບສະບັບນີ້.

## ໝວດ ທີ III
## ສິດ ແລະໜ້າທີ່ ຂອງບໍລິສັດນໍາເຂົ້າ- ສົ່ງອອກວັດຖຸມີຄ່າ

ມາດຕາ 6. ສິດ ແລະໜ້າທີ່ ໃນການດໍາເນີນທຸລະກິດຂອງບໍລິສັດນໍາເຂົ້າ- ສົ່ງອອກ ວັດຖຸມີຄ່າ:

- ນໍາເຂົ້າວັດຖຸມີຄ່າ ຈາກຕ່າງປະເທດ;
- ສະໜອງວັດຖຸມີຄ່າຢູ່ພາຍໃນປະເທດ;
- ສົ່ງອອກວັດຖຸມີຄ່າໄປຂາຍຢູ່ຕ່າງປະເທດ;
- ຊື້-ຂາຍວັດຖຸມີຄ່າ ຢູ່ຕ່າງປະເທດ; ( ກ່ອນຈະປະຕິບັດໜ້າທີ່ນີ້ໄດ້ຕ້ອງຂໍອະນຸຍາດນໍາ ທະນາຄານ ແຫ່ງ ສປປ ລາວ ອີກ)
- ຕິດປ້າຍບໍລິສັດນໍາເຂົ້າ-ສົ່ງອອກວັດຖຸມີຄ່າ;
- ຕິດໃບອານຸຍາດດໍາເນີນທຸລະກິດສ້າງຕັ້ງບໍລິສັດນໍາເຂົ້າ-ສົ່ງອອກວັດຖຸມີຄ່າຂອງຕົນໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ;
- ຂໍອະນຸຍາດການນໍາເຂົ້າ-ສົ່ງອອກວັດຖຸມີຄ່າແຕ່ລະຄັ້ງນໍາ ທະນາຄານ ແຫ່ງ ສປປ ລາວ;
- ປະຕິບັດລະບຽບການສ້າງຕັ້ງ ແລະ ຄຸ້ມຄອງການນໍາເຂົ້າ-ສົ່ງອອກວັດຖຸມີຄ່າສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 7. ການເປີດບັນຊີເງິນຝາກຂອງບໍລິສັດນໍາເຂົ້າ- ສົ່ງອອກວັດຖຸມີຄ່າ:

- ບໍລິສັດນໍາເຂົ້າ- ສົ່ງອອກ ວັດຖຸມີຄ່າຕ້ອງເປີດບັນຊີເງິນຝາກທັງເປັນເງິນກີບ ແລະ ເງິນຕາຕ່າງປະເທດໄວ້ນໍາທະນາຄານທຸລະກິດໃດໜຶ່ງ ທີ່ຕັ້ງຢູ່ ສປປ ລາວ ເພື່ອອໍານວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວທຸລະກິດຂອງຕົນ;
- ຖ້າບໍລິສັດນໍາເຂົ້າ- ສົ່ງອອກວັດຖຸມີຄ່າ ມີຄວາມຕ້ອງການເປີດບັນຊີເງິນຝາກຢູ່ຕ່າງປະເທດເພື່ອເຄື່ອນໄຫວທຸລະກິດ ຕ້ອງໄດ້ຮັບອະນຸຍາດຈາກ ທະນາຄານ ແຫ່ງ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ຂອງລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າສະບັບເລກທີ 01/ສປປ, ລົງວັນທີ 09 ສິງຫາ 2002 ແລະ ມາດຕາ 9 ຂອງບົດແນະນໍາການຈັດຕັ້ງປະຕິບັດ ສະບັບເລກທີ 02/ທຫລ, ລົງວັນທີ 29/09/2003.

ມາດຕາ 8. ການປະຕິບັດພັນທະຂອງບໍລິສັດ ນໍາເຂົ້າ- ສົ່ງອອກ ວັດຖຸມີຄ່າ:

ບໍລິສັດນໍາເຂົ້າ-ສົ່ງອອກວັດຖຸມີຄ່າຕ້ອງປະຕິບັດພັນທະພາສີ-ອາກອນຕາມລະບຽບການຂອງກະຊວງການເງິນວາງອອກໃນແຕ່ລະໄລຍະຢ່າງເຂັ້ມງວດ.

## ໝວດທີ IV
## ການຊື້-ຂາຍວັດຖຸມີຄ່າ

ມາດຕາ 9. ການຊື້-ຂາຍວັດຖຸມີຄ່າ ແລະການອອກໃບຮັບເງິນ ແລະໃບແຈ້ງລາຄາ :

- ການຊື້-ຂາຍວັດຖຸມີຄ່າຢູ່ພາຍໃນ ແລະຕ່າງປະເທດ ຕ້ອງຜ່ານລະບົບທະນາຄານ ;
- ການຊື້-ຂາຍວັດຖຸມີຄ່າຢູ່ພາຍໃນ ສປປ ລາວ ຕ້ອງຊຳລະເປັນເງິນກີບ;
- ການສັ່ງຊື້-ຂາຍວັດຖຸມີຄ່າກັບຕ່າງປະເທດ ຕ້ອງສຳເນົາໃບແຈ້ງລາຄາແຕ່ລະຄັ້ງ ;
- ການຊື້-ຂາຍວັດຖຸມີຄ່າຢູ່ພາຍໃນປະເທດ ຕ້ອງມີໃບຮັບເງິນແຕ່ລະຄັ້ງ;
- ທັງໃບແຈ້ງລາຄາ ແລະໃບຮັບເງິນ ເປັນເອກະສານຢັ້ງຢືນການລົງບັນຊີທຸກຄັ້ງ.

## ໝວດທີ V
## ການບັນຊີ, ການກວດກາ ແລະ ການລາຍງານ

ມາດຕາ 10. ການຖືບັນຊີ:

ບໍລິສັດນຳເຂົ້າ- ສົ່ງອອກວັດຖຸມີຄ່າ ຕ້ອງຖືບັນຊີຕິດຕາມການເຄື່ອນໄຫວທຸລະກິດນຳເຂົ້າ-ສົ່ງອອກວັດຖຸມີຄ່າ ແລະຖືບັນຊີວິສາຫະກິດຕາມລະບຽບກົດໝາຍຂອງ ສປປ ລາວ.

ມາດຕາ 11. ການຄຸ້ມຄອງ ແລະກວດກາ:

- ການດຳເນີນທຸລະກິດບໍລິສັດນຳເຂົ້າ- ສົ່ງອອກວັດຖຸມີຄ່າຕ້ອງຢູ່ພາຍໃຕ້ການຄຸ້ມຄອງ ແລະກວດກາຂອງ ທະນາຄານ ແຫ່ງ ສປປ ລາວ;
- ການນຳເຂົ້າ-ສົ່ງອອກ ວັດຖຸມີຄ່າແຕ່ລະຄັ້ງຂອງບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າຕ້ອງໄດ້ຮັບອະນຸຍາດຈາກ ທະນາຄານ ແຫ່ງ ສປປ ລາວ;
- ວັດຖຸມີຄ່າທີ່ໄດ້ຮັບອະນຸຍາດນຳເຂົ້າຢ່າງຖືກຕ້ອງຈາກ ທະນາຄານ ແຫ່ງ ສປປ ລາວ, ບໍລິສັດຈະຕ້ອງນຳເອົາໄປຝາກໄວ້ນຳທະນາຄານທຸລະກິດໃດໜຶ່ງທີ່ຢູ່ ສປປ ລາວ ແລ້ວສຳເນົາໃບຮັບຝາກສົ່ງໃຫ້ ທະນາຄານ ແຫ່ງ ສປປ ລາວ ພາຍໃນ 1 ອາທິດ;
- ໃນແຕ່ລະປີບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າຕ້ອງມີການກວດສອບບັນຊີຈາກພາຍນອກ ໂດຍອີງການກວດສອບບັນຊີແຫ່ງລັດ ຫຼືບໍລິສັດກວດສອບທີ່ໄດ້ຮັບອະນຸຍາດເຄື່ອນໄຫວຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;
- ທະນາຄານ ແຫ່ງ ສປປ ລາວ ສາມາດກວດກາກັບທີ່ຢ່າງໜ້ອຍ 1 ຄັ້ງຕໍ່ປີ ແລະກວດກາແບບສຸກເສີນຖ້າເຫັນວ່າຈຳເປັນ.

ມາດຕາ 12. ການລາຍງານ:

- ບໍລິສັດນຳເຂົ້າ-ສົ່ງອອກ ວັດຖຸມີຄ່າຕ້ອງປະຕິບັດລະບອບລາຍງານດ້ານການບັນຊີ-ການເງິນຕາມລະບອບການບັນຊີຂອງກະຊວງການເງິນກຳນົດໄວ້ຢ່າງເຂັ້ມງວດ;
- ບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າ ຕ້ອງສົ່ງລາຍງານການເງິນ, ແລະສະພາບການນຳເຂົ້າ-ສົ່ງອອກ

ວັດຖຸມີຄ່າ ແລະການຊື້-ຂາຍປະຈຳເດືອນ, ປະຈຳງວດ ແລະປະຈຳປີຕາມແບບລາຍງານຂອງ ທະນາຄານ ແຫ່ງ ສປປ ລາວ ກຳນົດອອກ;

- ບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າຕ້ອງໄດ້ສົ່ງໃບລາຍງານປະຈຳເດືອນພາຍໃນອາທິດທຳອິດຂອງເດືອນຕໍ່ ມາ, ປະຈຳງວດໃຫ້ສົ່ງພາຍໃນ ອາທິດທີ 2 ຂອງເດືອນຕໍ່ມາ ແລະປະຈຳປີໃຫ້ສົ່ງ ທະນາຄານ ແຫ່ງ ສປປ ລາວ ພາຍໃນເດືອນທຳອິດຂອງປີຕໍ່ມາ.

## ໝວດທີ VI
## ມາດຕະການຕໍ່ຜູ້ລະເມີດ

ມາດຕາ 13. ມາດຕະການຕໍ່ຜູ້ລະເມີດ:

ບໍລິສັດນຳເຂົ້າ- ສົ່ງອອກວັດຖຸມີຄ່າ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ຢູ່ ສປປ ລາວ ຫາກມີການລະເມີດລະບຽບສະບັບນີ້ ຈະຖືກປະຕິບັດມາດຕະການແຈ້ງເຕືອນເປັນລາຍລັກອັກສອນຈາກ ທະນາຄານ ແຫ່ງ ສປປ ລາວ, ຖ້າຫາກຍັງສືບຕໍ່ລະເມີດ ທະນາຄານ ແຫ່ງ ສປປ ລາວຈະຍົກເລີກ ຫຼືຖອນໃບອະນຸຍາດສ້າງຕັ້ງບໍລິສັດນຳເຂົ້າ-ສົ່ງອອກວັດຖຸມີຄ່າຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ເລກທີ 01/ສປປ, ລົງວັນທີ 09/08/2002 ແລະບົດແນະນຳການຈັດຕັ້ງປະຕິບັດເລກທີ່ 02/ທຫລ, ລົງວັນທີ 29/09/2003 ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະວັດຖຸມີຄ່າ.

## ໝວດທີ່ VII
## ການຈັດຕັ້ງປະຕິບັດ

ມາດຕາ 14. ການປ່ຽນສະຖານທີ່ນຳເຂົ້າ-ສົ່ງອອກວັດຖຸມີຄ່າ:

ໃນກໍລະນີມີຄວາມຈຳເປັນທີ່ຕ້ອງປ່ຽນສະຖານທີ່ບໍລິສັດດັ່ງກ່າວຕ້ອງໄດ້ເຮັດໜັງສືສະເໜີລ່ວງໜ້າ 1 ເດືອນຕໍ່ທະນາຄານ ແຫ່ງ ສປປລາວ ແລະພາກສ່ວນທີ່ກ່ຽວຂ້ອງ;

ມາດຕາ 15. ການຍຸບເລີກ:

ການດຳເນີນທຸລະກິດນຳເຂົ້າ-ສົ່ງອອກວັດຖຸມີຄ່າ:

- ມີຄຳສັ່ງໃຫ້ຍຸບເລີກຈາກ ທະນາຄານ ແຫ່ງ ສປປ ລາວ;
- ລົ້ມລະລາຍ;
- ບໍລິສັດເຄື່ອນໄຫວຫຼຸບທຶນຢ່າງຕໍ່ເນື່ອງ ແລະບໍ່ສາມາດແກ້ໄຂໄດ້.

ມາດຕາ 16. ການລົບລ້າງ ຫຼືການຖອນໃບອະນຸຍາດການດຳເນີນທຸລະກິດນຳເຂົ້າ-ສົ່ງອອກວັດຖຸມີຄ່າ:

ທະນາຄານ ແຫ່ງ ສປປ ລາວ ມີສິດລົບລ້າງ ຫຼືຖອນໃບອານຸຍາດການດຳເນີນທຸລະກິດໄດ້ໃນກໍລະນີເຫັນວ່າບໍລິສັດນຳເຂົ້າ- ສົ່ງອອກວັດຖຸມີຄ່າຫາກມີການກະທຳຜິດຕໍ່ລະບຽບສະບັບນີ້.

ມາດຕາ 17. ການຈັດຕັ້ງປະຕິບັດ:

ໃຫ້ກົມນະໂຍບາຍເງິນຕາທະນາຄານ ແຫ່ງ ສປປ ລາວ ອອກຄຳແນະນຳການຈັດຕັ້ງປະຕິບັດ, ແລະຕິດຕາມກວດກາລະບຽບການສະບັບນີ້ຢ່າງເຂັ້ມງວດ .

ມາດຕາ 18. ຜົນສັກສິດ:

ລະບຽບການສະບັບນີ້ມີຜົນບັງຄັບໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ພູເພັດ ຄຳພູນວົງ